# ແມ່ຍິງນະຄອນຫລວງວຽງຈັນຍ້ອງຍໍ ທະນາຄານ ແຫ່ງ ສປປ ລາວ



ໃນວັນທີ 24 ພະຈິກ 2009 ຜ່ານມານີ້, ທີ່ຫ້ອງການທະນາຄານ ແຫ່ງ ສປປ ລາວ (ທຫລ), ຄະນະສະຫະພັນແມ່ຍິງນະຄອນຫລວງວຽງຈັນ ເຊິ່ງນຳໂດຍທ່ານ ນາງ ລຳພອຍ ສີອັກຄະຈັນ ປະທານສະຫະພັນແມ່ຍິງນະຄອນຫລວງວຽງຈັນໄດ້ໃຫ້ກຽດມອບໃບຍ້ອງຍໍໃຫ້ແກ່ ທະນາຄານ ແຫ່ງ ສປປ ລາວ ເນື່ອງໃນໂອກາດທີ່ທະນາຄານລາວໃຫ້ການອຸປະຖຳແກ່ກອງປະຊຸມໃຫຍ່ສະຫະພັນແມ່ຍິງນະຄອນຫລວງວຽງຈັນທີ່ສຳເລັດລົງຫວ່າງບໍ່ດົນມານີ້.

ໃນໂອກາດດັ່ງກ່າວ ທ່ານ ມິ່ງແກ້ວ ສຸວັດດີ ຮອງຫົວຫນ້າຫ້ອງການທະນາຄານກໍ່ໄດ້ຕາງຫນ້າໃຫ້ຄະນະພັກ-ຄະນະນຳທະນາຄານເປັນຜູ້ຮັບຍ້ອງຍໍຄັ້ງນີ້ ເປັນການຈາລຶກບຸນຄຸນທີ່ທາງທະນາຄານໄດ້ປະກອບສ່ວນປື້ມຊຽນປົກແຂງທີ່ພົວພັນກັບການສົ່ງເສີມການນຳໃຊ້ເງິນກີບ ແລະ ກອງປະຊຸມໃຫຍ່ສະຫະພັນແມ່ຍິງດັ່ງກ່າວ ເຊິ່ງມີທັງຫມົດ 200 ຫົວ ມູນຄ່າ 4 ລ້ານກີບ.

ທ່ານ ມິ່ງແກ້ວ ໄດ້ສະແດງຄວາມຮັກແພງ-ສາມັກຄີ ແລະ ຕີລາຄາສູງຕໍ່ບົດບາດຂອງແມ່ຍິງລາວໃນພາລະກິດປ່ຽນແປງໃຫມ່ ເຖິງແມ່ນວ່າ: ວັດຖຸສິ່ງຂອງຈະບໍ່ຫລວງຫລາຍແຕ່ມັນກໍ່ປຽບເຫມືອນນ້ຳໃຈຂອງຄະນະນຳ-ພະນັກງານທະນາຄານ ແຫ່ງ ສປປ ລາວ ທີ່ມອບໃຫ້ແກ່ກອງປະຊຸມ ເຊື່ອຫມັ້ນວ່າ: ໃນອະນາຄົດຄວາມສາມັກຄີລະຫວ່າງສອງຝ່າຍຈະແຕກດອກອອກຜົນຍິ່ງໆຂຶ້ນ.

ອ້າງອີງຈາກຫນັງສືພິມປະຊາຊົນ ສະບັບວັນທີ 01/12/2009